# ຜູ້ໃຫ້ບໍລິການ - ຂໍ້ຜິດພາດທົ່ວໄປ ແລະ ການລະເມີດກົດລະບຽບທຸລະກິດ

## ການຕອກບັດເຂົ້າຂັດຂ້ອງ

| ຂໍ້ຄວາມຂັດຂ້ອງ | ການດຳເນີນການທີ່ຈຳເປັນ |
|---|---|
| "ບໍ່ມີການອະນຸມັດໃຫ້ໃຊ້ບັນຊີນີ້.<br>ກະລຸນາຕິດຕໍ່ຫົວໜ້າງານຂອງທ່ານ." | • ນີ້ເທົ່າກັບວ່າບໍ່ໄດ້ຮັບບັດສິນມະນາຄຸນໃນທາງໄປສະນີໂດຍໃຊ້ລະບົບບັດສິນມະນາຄຸນເຈ້ຍ. ການອະນຸມັດຂອງຜູ້ຊົມໃຊ້ບໍ່ແມ່ນຂໍ້ມູນຫຼ້າສຸດ.<br>• ຕິດຕໍ່ຫ້ອງການໃນທ້ອງຖິ່ນຂອງທ່ານເພື່ອການແກ້ໄຂໃຫ້ໄວເທົ່າທີ່ຈະໄວໄດ້ເພື່ອຮັບປະກັນວ່າທ່ານໄດ້ຮັບອະນຸມັດໃນເຄືອຂ່າຍ. |
| "ທ່ານກຳລັງພະຍາຍາມຕອກບັດເຂົ້າສຳລັບວັນທີຂອງການບໍລິການທີ່ກາຍວັນທີຄືນເຈັບອອກໂຮງໝໍ. ກະລຸນາຕິດຕໍ່ຫົວໜ້າງານຂອງທ່ານ." | • ຜູ້ຊົມໃຊ້ບໍ່ໄດ້ຮັບອະນຸມັດໃຫ້ຮັບບໍລິການໃນວັນທີປ້ອນເຂົ້າ. ຕິດຕໍ່ຫ້ອງການໃນທ້ອງຖິ່ນຂອງທ່ານເພື່ອແກ້ໄຂ. |
| "ທ່ານມີການຕອກບັດຊໍ້າຊ້ອນ ຫຼື ທັບຊ້ອນກັນໃນລະບົບສຳລັບວັນ ແລະ ເວລານີ້. (ລະຫັດການຕອກບັດຊໍ້າຊ້ອນ/ທັບຊ້ອນ: xxx) ກະລຸນາເລືອກວັນ/ເວລາ ອື່ນ ຫຼື ຕິດຕໍ່ຫົວໜ້າງານຂອງທ່ານ." | • ເບິ່ງຄືນການປ້ອນຂໍ້ມູນຂອງທ່ານເພື່ອກວດເບິ່ງການທັບຊ້ອນ ແລະ ປັບປ່ຽນການປ້ອນຂໍ້ມູນທີ່ຈຳເປັນ.<br>• ຖ້າການປ້ອນຂໍ້ມູນຢູ່ໃນສະພາບ "ຖືກອະນຸມັດ" ຫຼື "ຖືກດຳເນີນການ" ແລະຕ້ອງການການແກ້ໄຂໃຫ້ຖືກຕ້ອງ, ກະລຸນາຕິດຕໍ່ຫ້ອງການທ້ອງຖິ່ນຂອງທ່ານເພື່ອການຊ່ວຍເຫຼືອ. |
| "ທົກເຄັ້ນເລີ່ມຕົ້ນ ແລະ ສິ້ນສຸດ FOB ບໍ່ຖືກຕ້ອງ. ທ່ານຕ້ອງການສືບຕໍ່ອອກຈາກລະບົບຜອດໂທລບໍ່?" | • ກວດເບິ່ນເພື່ອໃຫ້ແນ່ໃຈວ່າລະຫັດ fob ຖືກປ້ອນເຂົ້າຢ່າງຖືກຕ້ອງ.<br>• ຖ້າລະຫັດ fob ຖືກກັບກັນສິ່ງທີ່ທ່ານຂຽນ ແລະ ທ່ານຍັງໄດ້ຮັບຂໍ້ຜິດພາດນີ້, ຄລິກແມ່ນແລ້ວເພື່ອສືບຕໍ່ການເຂົ້າສູ່ລະບົບຜອດໂທລ." ການປ້ອນຂໍ້ມູນຈະຖືກບັນທຶກຄືກັນການປ້ອນທີ່ບໍ່ສອດຄ່ອງກັບ EVV. |
| "ກະລຸນາປ້ອນ ວັນທີທີ່ຖືກຕ້ອງ." | • ທ່ານບໍ່ສາມາດປ້ອນຂໍ້ມູນວັນທີໃນອານະຄົດໄດ້. ຮັບປະກັນວ່າວັນທີແມ່ນວັນທີຂອງມື້ນີ້ ຫຼື ມື້ທີ່ຜ່ານມາ. |
| "ເວລາບໍ່ສາມາດກາຍເວລາປະຈຸບັນໄດ້." | • ທ່ານບໍ່ສາມາດປ້ອນຂໍ້ມູນເວລາໃນອານາຄົດໄດ້. ຮັບປະກັນວ່າເວລາແມ່ນເວລາປະຈຸບັນ ຫຼື ຜ່ານມາແລ້ວ. |
| "ກະລຸນາເລືອກຢ່າງໜ້ອຍໜຶ່ງຄຳສັ່ງສຳເລັດຮູບ. " | • ທ່ານຕ້ອງເລືອກຄຳຢັ້ງຢືນໃນພາກສ່ວນຂອງ "ຄຳສັ່ງສຳເລັດຮູບ" ກ່ອນຢັ້ງຢືນການຕອກບັດອອກ. |
| "ຈຳນວນຕອກບັດທັງໝົດບໍ່ສາມາດມີຫຼາຍກວ່າ xxx. ທ່ານໄດ້ປ້ອນ xxx."<br>"ການປ້ອນລະຫັດ ID xxx ຖືກປະຕິເສດ." | • ການປ້ອນຂໍ້ມູນບໍ່ສາມາດໃຫຍ່ກວ່າຈຳນວນສູງສູດຂອງການຕອກບັດແຕ່ລະຄັ້ງ.<br>• ການປ້ອນຂໍ້ມູນຖືກປະຕິເສດ.<br>• ທ່ານຈະຕ້ອງສ້າງປະຫວັດການປ້ອນຂໍ້ມູນເພື່ອລາຍການເວລາທີ່ຖືກຕ້ອງຂອງທ່ານ. |

## ການລະເມີດກົດລະບຽບທຸລະກິດ

**ການຕອກບັດຂອງທ່ານມີການລະເມີດໜຶ່ງ ຫຼື ຫຼາຍຄັ້ງ. ກະລຸນາກວດຄືນຜົນໄດ້ຮັບລຸ່ມນີ້ ແລະ ເລືອກ 'ຮັບຮູ້.' ຖ້າເປັນຄວາມພິດພາດ, ກະລຸນາລຶບລ້າງ ແລະ ດັດແກ້ການປ້ອນຂໍ້ມູນຂອງທ່ານ."**

- **ກົດລະບຽບສະເພາະຖືກລະເມີດຈະປາກົດຂຶ້ນໃນຂໍ້ຄວາມລຸ່ມນີ້.**
- ທ່ານຈະໄດ້ຮັບຂໍ້ຄວາມໃນ OR PTC DCI ບອກທ່ານວ່າກົດລະບຽບໃດຖືກລະເມີດ. ຂຶ້ນກັບຄວາມມັກບັນຊີຂອງທ່ານ, ທ່ານອາດໄດ້ຮັບຂໍ້ຄວາມ ແລະ ອີເມວບອກທ່ານວ່າກົດລະບຽບ ທຸລະກິດຖືກລະເມີດ ແລະ ແນະນຳໃຫ້ທ່ານກວດຄືນ ຂໍ້ຄວາມໃນ OR PTC DCI ເພື່ອຂໍ້ມູນ ລະອຽດ.

- ທ່ານ (ຜູ້ໃຫ້ການເບິ່ງແຍງ) ເປັນຜູ້ຮັບຜິດຊອບໃນການຕິດແກ້ເວລາເພື່ອໃຫ້ແນ່ໃຈວ່າທ່ານຢູ່ພາຍໃນຊົ່ວໂມງທີ່ໄດ້ຮັບການອະນຸມັດ. ຖ້າທ່ານຕ້ອງການການຊ່ວຍເຫຼືອ, ກະລຸນາຕິດຕໍ່ຫ້ອງການທ້ອງ ຖິ່ນຂອງທ່ານ.

| ກົດລະບຽບທຸລະກິດ | ການດຳເນີນການທີ່ຈຳເປັນ |
|---|---|
| ຍອດທີ່ເຫຼືອໃນການອະນຸມັດ | • ການປ້ອນຂໍ້ມູນຊົ່ວໂມງຂອງທ່ານກາຍຕົວເລກທີ່ອະນຸມັດຂອງຊົ່ວໂມງໃນແຜນບໍລິການ/ອະນຸມັດຂອງຜູ້ຊົມໃຊ້.<br>• ທ່ານຈຳເປັນຕ້ອງແກ້ໄຂການປ້ອນຂໍ້ມູນເວລາເພື່ອທ່ານຈະບໍ່ກາຍຊົ່ວໂມງທີ່ອະນຸມັດ. ຕິດຕໍ່ຫ້ອງການທ້ອງຖິ່ນຂອງທ່ານ, ຖ້າທ່ານຕ້ອງການການຊ່ວຍເຫຼືອ.<br>• ການປ້ອນຂໍ້ມູນໄລຍະທາງທີ່ຫຼາຍກວ່າຕົວເລກໄລຍະທາງທີ່ອະນຸຍາດຈະບໍ່ຖືກບັນທຶກເຂົ້າ. ທ່ານຈະຕ້ອງໄດ້ປັບປ່ຽນໄລຍະທາງກ່ອນການບັນທຶກການປ້ອນຂໍ້ມູນ. |
| ບັນທຶກການຕອກບັດເຂົ້າວຽກຂອງພະນັກງານທັນເວລາ | • ທ່ານສາມາດປ້ອນຂໍ້ມູນເວລາ/ໄລຍະທາງໄດ້ສູງສຸດ 365 ມື້ເທົ່ານັ້ນຫຼັງຈາກວັນທີ່ໃຊ້ບໍລິການ.<br>• ກະລຸນາຮັບຊາບວ່າ: ການປ້ອນຂໍ້ມູນຍ້ອນຫຼັງຈະບໍ່ສອດຄ່ອງກັບ EVV. |
| ບັນຊີບໍລິການຕອກບັດປ້ອນຂໍ້ມູນວັນເລີ່ມວຽກຂອງພະນັກງານ<br>ຫຼື<br>ບັນຊີບໍລິການຕອກບັດປ້ອນຂໍ້ມູນວັນສິ້ນສຸດວຽກຂອງພະນັກງານ | • ທ່ານບໍ່ໄດ້ຮັບອະນຸມັດເພື່ອໃຫ້ບໍລິການຜູ້ຊົມໃຊ້ຄົນນີ້ໃນ ວັນທີນີ້.<br>• ການປ້ອນຂໍ້ມູນຂອງທ່ານຖືກປະຕິເສດ.<br>• ວັນທີ່ທ່ານເລີ່ມ ຫຼື ຢຸດເຮັດວຽກສຳລັບລູກຄ້າອາດຈະຖືກປ້ອນຂໍ້ມູນບໍ່ຖືກຕ້ອງ ແລະ ທ່ານຈະຕ້ອງໄດ້ຕິດຕໍ່ຫ້ອງການທ້ອງຖິ່ນຂອງທ່ານເພື່ອແກ້ໄຂບັນຫານີ້. |
| ກົດລະບຽບທຸລະກິດຂອງການຕອກບັດເມື່ອຄົນເຈັບອອກໂຮງໝໍ | • ຜູ້ບໍລິໂພກບໍ່ໄດ້ຮັບອະນຸຍາດໃຫ້ຮັບການບໍລິການໃນວັນທີນີ້.<br>• ການປ້ອນຂໍ້ມູນຂອງທ່ານຖືກປະຕິເສດ.<br>• ວັນທີທີ່ຜູ້ບໍລິໂພກຢຸດຮັບການບໍລິການອາດຈະຖືກປ້ອນເຂົ້າບໍ່ຖືກຕ້ອງ ແລະ ທ່ານຈະຕ້ອງຕິດຕໍ່ຫ້ອງການທ້ອງຖິ່ນຂອງທ່ານເພື່ອແກ້ໄຂ. |
| ວັນທີການຕອກບັດຢຸດຕິການລ້າງບັນການ | • ທ່ານບໍ່ໄດ້ຮັບອະນຸມັດເພື່ອໃຫ້ການບໍລິການໃນວັນທີນີ້.<br>• ການປ້ອນຂໍ້ມູນຂອງທ່ານຖືກປະຕິເສດ.<br>• ວັນທີທີ່ທ່ານຢຸດການບໍລິການອາດຖືກປ້ອນເຂົ້າບໍ່ຖືກຕ້ອງ ແລະ ທ່ານຈະຕ້ອງຕິດຕໍ່ຫ້ອງການທ້ອງຖິ່ນຂອງທ່ານເພື່ອແກ້ບັນຫາ. |